ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=============

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 3327 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 16 SEP 2015

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 138/ນຍ, ລົງວັນທີ 04 ພຶດສະພາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບ ເລກທີ 1037/ຮສສ.ຈພງ, ລົງວັນທີ 11 ກັນຍາ 2015.

## ລັດຖະມົນຕີວ່າການ
## ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ.**

ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ຂຽນຫຍໍ້ວ່າ **"ພຈງ"** ແມ່ນກົມວິຊາການໜຶ່ງທີ່ສັງກັດ ໃນໂຄງປະກອບການຈັດຕັ້ງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ໃນການຄົ້ນຄວ້າ, ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງມະຫາພາກວຽກງານພັດທະນາສີມືແຮງງານ ແລະ ຈັດຫາງານ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່ຂອງກົມ.**

3.1 ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ດຳລັດ, ລະບຽບການຕ່າງໆ ກ່ຽວກັບການພັດທະນາສີມືແຮງງານ ແລະ ຈັດຫາງານ;

3.2 ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ແຜນງົບປະມານໃນແຕ່ລະໄລຍະກ່ຽວກັບການຄຸ້ມຄອງມະຫາພາກດ້ານການພັດທະນາສີມືແຮງງານ ແລະ ຈັດຫາງານ;